ລັດວິສາຫະກິດຖືຮຸ້ນລາວ

LAO HOLDING STATE ENTERPRISE

# ລາຍງານປະຈຳປີ

# ANNUAL REPORT

# 2019










globalgroup
Certificate of Registration
QUALITY MANAGEMENT SYSTEM
LAO HOLDING STATE ENTERPRISE
ISO 9001:2015

www.laoholding.com

globalgroup ISO 9001

UKAS MANAGEMENT SYSTEMS 5965

Cert No. 63Q16125













globalgroup
United Kingdom

Certificate of Registration

This is to certify that the

**QUALITY MANAGEMENT SYSTEM**

of

**LAO HOLDING STATE ENTERPRISE**

for

**Holding and Managing of Shares in Independent Power Producer (IPP) Projects and related Businesses. Sale and Distribution of Fly Ash.**

has been assessed and registered against the provisions of

**ISO 9001:2015**

International Standard

with

Chairman









# ສາລະບານ

| ເນື້ອໃນ | ໜ້າ |
|---|---|
| ບົດຄວາມຂອງທ່ານຜູ້ອຳນວຍການ | i |
| ພາລະບົດບາດ, ໜ້າທີ່, ວິໄສທັດ ແລະ ນະໂຍບາຍລວມຂອງ ລຣລ | 1 |
| 1. ພາລະບົດບາດ ແລະ ໜ້າທີ່ | 1 |
| 2. ວິໄສທັດ | 3 |
| 3. ນະໂຍບາຍລວມຂອງ ລຣລ | 3 |
| ເຫດການເດັ່ນ | 4 |
| ການລົງທຶນ ແລະ ຜົນປະກອບການດ້ານທຸລະກິດ | 8 |
| ກິ່ງຈັກການຈັດຕັ້ງຂອງ ລຣລ | 10 |
| ການຈັດຕັ້ງປະຕິບັດໂຄງການ | 13 |
| 1. ໂຄງການໄຟຟ້ານ້ຳເທີນ 2 | 13 |
| 2. ໂຄງການໄຟຟ້າຄວາມຮ້ອນຫົງສາ | 16 |
| 3. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ | 19 |
| 4. ໂຄງການໄຟຟ້ານ້ຳງຽບ 1 | 21 |
| 5. ໂຄງການທຸລະກິດຂີ້ເທົ່າລອຍ | 23 |
| 6. ໂຄງການໃໝ່ຢູ່ໃນແຜນຮ່ວມພັດທະນາ | 24 |
| ການບໍລິຫານ ແລະ ການປະຕິບັດສັນຍາໂຄງການ | 25 |
| ການປະຕິບັດພັນທະຕາມກົດໝາຍ | 26 |
| ການບໍລິຫານລາຍຮັບ-ລາຍຈ່າຍ | 27 |
| ການພັດທະນາບຸກຄະລາກອນ ແລະ ອົງກອນ | 27 |
| ການປະກອບສ່ວນຊ່ວຍສັງຄົມ | 28 |
| ພາກສະຫຼຸບ | 29 |

# ບົດຄວາມຂອງທ່ານຜູ້ອຳນວຍການ



ໃນທ່າມກາງທີ່ທົ່ວພັກ, ທົ່ວປວງຊົນລາວທັງຊາດ ກຳລັງສຸມໃສ່ແຂ່ງຂັນກັນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ຢ່າງເປັນຂະບວນຟົດຟື້ນ ພ້ອມທັງການສ້າງຜົນງານ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ກອງປະຊຸມໃຫຍ່ອົງຄະນະພັກກະຊວງພະລັງງານ ແລະ ບໍ່ແຮ່ ຄັ້ງທີ III ແລະ 2 ວັນປະຫວັດສາດສຳຄັນຂອງຊາດ ຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 65 ປີ ແລະ ວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 45 ປີ. ລັດວິສາຫະກິດຖືຮຸ້ນລາວ (ລຮລ) ຊຶ່ງເປັນຫົວໜ່ວຍທຸລະກິດໜຶ່ງຂອງລັດທີ່ຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່ ໂດຍມີກະຊວງການເງິນເປັນເຈົ້າຂອງທຶນ 100%, ກໍ່ໄດ້ອອກແຮງຕັ້ງໜ້າ ແລະ ສຸມທຸກກຳລັງແຮງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ເພື່ອສ້າງຜົນງານຕ້ອນຮັບເຫດການສຳຄັນດັ່ງກ່າວ.

ໃນປີ 2019 ລຮລ ໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ ສະແດງອອກການເຄື່ອນໄຫວທຸລະກິດໄດ້ຮັບຜົນສຳເລັດ ແລະ ມີຜົນປະກອບການທີ່ດີສົມຄວນ, ລຮລ ມີລາຍຮັບ 52,74 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 439,67 ຕື້ກີບ (ລື່ນແຜນການ 15,48%), ໃນນັ້ນ ໄດ້ຈາກເງິນປັນຜົນໂຄງການໄຟຟ້ານ້ຳເທີນ 2, ໂຄງການໄຟຟ້າຄວາມຮ້ອນຫົງສາ, ການຂາຍຂີ້ເທົ່າລອຍ, ການສະໜອງບຸກຄະລາກອນໃຫ້ບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ ແລະ ລາຍຮັບຈາກດອກເບ້ຍເງິນຝາກທະນາຄານ. ຜົນກຳໄລໃນປີ 2019 ບັນລຸໄດ້ 17,15 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 152,16 ຕື້ກີບ (ທຽບໃສ່ປີ 2018 ເພີ່ມຂຶ້ນ 99,32%). ລຮລ ໄດ້ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນ ແລະ ທັນເວລາ ໂດຍໄດ້ມອບອາກອນເງິນປັນຜົນ ແລະ ອາກອນອື່ນໆໃຫ້ລັດຖະບານ 5,26 ລ້ານໂດລາສະຫະລັດ, ຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນ 40,28 ລ້ານໂດລາສະຫະລັດ. ນອກຈາກນັ້ນ ຍັງໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຢ່າງມີປະສິດທິຜົນ ແລະ ມີຄວາມໂປ່ງໃສ ໂດຍມີການກວດສອບຈາກອົງການກວດສອບແຫ່ງລັດ, ບໍລິສັດກວດສອບສາກົນຈາກພາຍນອກ ລວມທັງການຕິດຕາມເອກະສານລາຍງານການເງິນ ຈາກຜູ້ສະໜອງທຶນແກ່ ລຮລ ຢ່າງເປັນປະຈຳ. ການຈັດຕັ້ງປະຕິບັດວຽກງານໃນບັນດາໂຄງການທີ່ ລຮລ ຮ່ວມຖືຮຸ້ນ: ໂຄງການໄຟຟ້ານ້ຳເທີນ 2, ໂຄງການໄຟຟ້າຄວາມຮ້ອນຫົງສາ, ໂຄງການເຊປຽນ-ເຊນ້ຳນ້ອຍ ແລະ ໂຄງການໄຟຟ້ານ້ຳງຽບ 1 ແມ່ນດຳເນີນໄປຕາມແຜນການທີ່ວາງໄວ້. ໂຄງການໄຟຟ້ານ້ຳງຽບ 1 ແລະ ໂຄງການເຊປຽນ-ເຊນ້ຳນ້ອຍ ກໍ່ສາມາດບັນລຸການຜະລິດໄຟຟ້າຂາຍຢ່າງເປັນທາງການໃນວັນທີ 06/09/2019 ແລະ ວັນທີ 06/12/2019 ຕາມລຳດັບ. ການດຳເນີນທຸລະກິດຂີ້ເທົ່າລອຍໃນໂຄງການໄຟຟ້າຄວາມຮ້ອນຫົງສາມີທ່າດີຂຶ້ນ, ສາມາດຈຳ

ໜ່າຍໄດ້ 351.464 ໂຕນ ເປັນມູນຄ່າ 1,47 ລ້ານໂດລາສະຫະລັດ ຖ້າທຽບໃສ່ປີຜ່ານມາຍອດຂາຍເພີ່ມຂຶ້ນ 11,03%. ແຜນການໃນອະນາຄົດ ລຮລ ຍັງມີໂຄງການໃໝ່ໃນແຜນຮ່ວມພັດທະນາ ເຊັ່ນ: ໂຄງການໄຟຟ້າຄວາມຮ້ອນຖ່ານຫີນ ເຂດເມືອງບົວລະພາ ແຂວງຄຳມ່ວນ ມີກຳລັງຕິດຕັ້ງປະມານ 2.000 MW ແລະ ໂຄງການອື່ນໆຕາມການມອບໝາຍຂອງລັດຖະບານ.

ສະຫຼຸບແລ້ວ, ການດຳເນີນທຸລະກິດຂອງ ລຮລ ໃນໄລຍະ 1 ປີຜ່ານມາ ແມ່ນໄດ້ຮັບຜົນສຳເລັດເປັນຢ່າງດີ. ໝາກຜົນທີ່ບັນລຸໄດ້ແມ່ນຍ້ອນມີການຊີ້ນຳ-ນຳພາອັນສະຫຼາດສ່ອງໃສຂອງພັກ ແລະ ລັດຖະບານ ໂດຍສະເພາະແມ່ນການຊີ້ນຳຢ່າງໃກ້ຊິດຈາກກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ ແລະ ສະພາບໍລິຫານຂອງ ລຮລ ທີ່ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ ແລະ ສະໜັບສະໜູນສົມທົບກັບການທຸ່ມເທເຫື່ອແຮງ ບວກກັບຄວາມບຸກບືນທ້າວທັນຂອງພະນັກງານ ລຮລ ໃນການປະຕິບັດໜ້າທີ່ການເມືອງອັນມີກຽດທີ່ພັກ ແລະ ລັດຖະບານມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ.

**ຜູ້ອຳນວຍການ**



**ມານະສິນ ວົງໄຊ**


ລັດວິສາຫະກິດ
ຖືຮຸ້ນລາວ
LAO HOLDING
STATE ENTERPRISE
www.laoholding.com
SHB
Solid partners, flexible solutions
ລຮລ
LHSE
LAO HOLDING STATE ENTERPRISE

# ພາລະບົດບາດ, ໜ້າທີ່, ວິໃສທັດ ແລະ ນະໂຍບາຍລວມຂອງ ລຣລ

## 1. ພາລະບົດບາດ ແລະ ໜ້າທີ່

ລັດວິສາຫະກິດຖືຮຸ້ນລາວ (ລຣລ) ສ້າງຕັ້ງຂຶ້ນໃນວັນທີ 23 ກຸມພາ 2005 ເປັນຫົວໜ່ວຍທຸລະກິດໜຶ່ງທີ່ຂຶ້ນກັບກະຊວງພະລັງງານ ແລະ ບໍ່ແຮ່, ຊຶ່ງແມ່ນກະຊວງການເງິນເປັນເຈົ້າຂອງທຶນ 100% ເພື່ອເຂົ້າຮ່ວມຖືຮຸ້ນ, ຄຸ້ມຄອງ ແລະ ບໍລິຫານຮຸ້ນຂອງລັດຖະບານຢູ່ໃນບັນດາໂຄງການຜະລິດໄຟຟ້າ ເພື່ອການສົ່ງອອກຢ່າງມີປະສິດທິຜົນ ແລະ ເກີດຜົນຕອບແທນສູງສຸດ.

ໃນປະຈຸບັນ ລຣລ ຕາງໜ້າໃຫ້ລັດຖະບານ ຮ່ວມລົງທຶນໃນ 4 ໂຄງການຄື: ໂຄງການໄຟຟ້ານໍ້າເທີນ 2 (ຖືຮຸ້ນ 25%); ໂຄງການໄຟຟ້າຄວາມຮ້ອນຫົງສາ (ຖືຮຸ້ນພາກໂຮງໄຟຟ້າ 20% ແລະ ພາກບໍ່ແຮ່ 25%), ໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (ຖືຮຸ້ນ 24%), ແລະ ໂຄງການໄຟຟ້ານໍ້າງຽບ 1 (ຖືຮຸ້ນ 25%). ລວມກໍາລັງຕິດຕັ້ງທັງໝົດປະມານ 3.658 ເມກາວັດ (MW) ແລະ ຜະລິດພະລັງງານໄດ້ປະມານ 21.551 ລ້ານກິໂລວັດໂມງ (KWh) ຕໍ່ປີ, ມູນຄ່າກໍ່ສ້າງໂຄງການທັງໝົດປະມານ 7.063 ລ້ານໂດລາສະຫະລັດ. ໃນນັ້ນ, ທຶນຮຸ້ນຂອງ ລຣລ 536,64 ລ້ານໂດລາສະຫະລັດ. ພ້ອມດຽວກັນນີ້, ລຣລ ຍັງຖືກມອບໝາຍໃຫ້ດໍາເນີນທຸລະກິດຂີ້ເທົ່າລອຍທີ່ເກີດຈາກຂະບວນການເຜົາໄໝ້ຖ່ານຫີນ ເພື່ອຜະລິດກະແສໄຟຟ້າໃນໂຄງການໄຟຟ້າຄວາມຮ້ອນຫົງສາ.

### ຕາຕະລາງຊັດສ່ວນການຖືຮຸ້ນ ແລະ ມູນຄ່າການລົງທຶນຂອງ ລຣລ ໃນ 4 ໂຄງການ

| ໂຄງການ | ຜູ້ຖືຮຸ້ນ ແລະ ຊັດສ່ວນການຖືຮຸ້ນ | ກໍາລັງຕິດຕັ້ງ (MW) | ການຜະລິດຕໍ່ປີ (GWh/Y) | ມູນຄ່າໂຄງການ (ລ້ານ USD) | ຊັດສ່ວນເງິນກູ້ຕໍ່ທຶນຮຸ້ນ (%) | ມູນຄ່າການລົງທຶນຂອງ ລຣລ (ລ້ານ USD) | ແຫຼ່ງທຶນຮຸ້ນຂອງ ລຣລ |
|---|---|---|---|---|---|---|---|
| ນໍ້າເທີນ 2 | EDFI (ຝຣັ່ງ): 40%<br>EGCO (ໄທ): 35%<br>**ລຣລ: 25%** | 1.080 | 5.936 | 1.297 | 72/28 | 112,50 | 1) ADB; 2) AFD; 3) IDA; 4) EIB; 5) ລັດຖະບານແຫ່ງ ສປປ ລາວ |
| ຫົງສາ | ພາກໂຮງໄຟຟ້າ:<br>BANPU (ໄທ): 40%<br>RH International (ສິງກະໂປ): 40%<br>**ລຣລ: 20%**<br>ພາກບໍ່ແຮ່:<br>BANPU (ໄທ): 37,50%<br>RH International (ສິງກະໂປ) 37,50%<br>**ລຣລ: 25%** | 1.878 | 12.200 | 3.710 | 75/25 | 220 | 1) ທະນາຄານກຸງໄທ (KTB)<br>2) ທະນາຄານອອມສິນ (GSB) |
| ເຊປຽນ-ເຊນໍ້ານ້ອຍ | SK (ເກົາຫຼີ): 26%<br>KOWEPO (ເກົາຫຼີ): 25%<br>RATCH (ໄທ): 25%<br>**ລຣລ: 24%** | 410 | 1.823 | 1.090 | 70/30 | 100,64 | 1) ທະນາຄານກຸງໄທ (KTB)<br>2) ກອງທຶນຮ່ວມມື ເພື່ອພັດທະນາດ້ານເສດຖະກິດ ສ. ເກົາຫຼີ (EDCF) |
| ນໍ້າງຽບ 1 | KPIC Netherland B.V. (Kansai) (ຍີ່ປຸ່ນ): 45%<br>EGAT Inter. (ໄທ): 30%<br>**ລຣລ: 25%** | 290 | 1.592 | 966 | 71/29 | 103,50 | 1) ທະນາຄານຍີ່ປຸ່ນເພື່ອການຮ່ວມມືສາກົນ (JBIC)<br>2) ທະນາຄານເພື່ອການນໍາເຂົ້າສົ່ງອອກປະເທດໄທ (Thai EXIM)<br>3) ທະນາຄານກຸງເທບ (Bangkok Bank) |

ລຣລ ມີພາລະບົດບາດ ແລະ ໜ້າທີ່ຕົ້ນຕໍໃນການເຂົ້າຮ່ວມລົງທຶນກັບນັກລົງທຶນຕ່າງປະເທດ ເພື່ອພັດທະນາບັນດາໂຄງການໄຟຟ້າ ແລະ ຂົນຂວາຍແຫຼ່ງທຶນມາປະກອບເປັນເງິນຮຸ້ນຂອງຕົນໃນບັນດາໂຄງການດັ່ງກ່າວ, ຄຸ້ມຄອງບໍລິຫານໂຄງການຮ່ວມກັບບັນດາຂາຮຸ້ນ ໂດຍຜ່ານກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານຂອງບໍລິສັດໂຄງການ (Project Company), ຄົ້ນຄວ້າປຶກສາຫາລືກ່ຽວກັບການພັດທະນາໂຄງການ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດຂອງລັດຖະບານໃນການພັດທະນາເສດຖະກິດ-ສັງຄົມ ໂດຍໃຫ້ຖືກຕ້ອງຕາມສັນຍາຕ່າງໆທີ່ໄດ້ລົງນາມຮ່ວມກັບລັດຖະບານ, ຮັບປະກັນການລົງທຶນທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ. ນອກຈາກນັ້ນ, ລຣລ ຍັງມີໜ້າທີ່ໃນການເຈລະຈາ ແລະ ບໍລິຫານບັນດາສັນຍາຕ່າງໆຂອງໂຄງການ ໂດຍສະເພາະແມ່ນສັນຍາຜູ້ຖືຮຸ້ນ ແລະ ສັນຍາຜູກພັນດ້ານການເງິນ, ຄຸ້ມຄອງບໍລິຫານໜີ້ເງິນກູ້ ແລະ ເງິນຮຸ້ນ, ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນ ໂດຍມີການກວດສອບຈາກບໍລິສັດກວດສອບພາຍນອກ ແລະ ການຕິດຕາມຈາກສະຖາບັນການເງິນສາກົນຢ່າງເປັນປະຈໍາ, ລວມທັງອົງການກວດສອບແຫ່ງລັດ, ຕິດຕາມຄວາມຄືບໜ້າການກໍ່ສ້າງໂຄງການ, ການດໍາເນີນການຜະລິດພະລັງງານໄຟຟ້າ ແລະ ການບໍາລຸງຮັກສາເຂື່ອນ, ເຂົ້າຮ່ວມວຽກງານກວດສອບພາຍໃນກັບບັນດາຂາຮຸ້ນຕ່າງປະເທດ, ປະສານສົມທົບກັບບັນດາຂະແໜງການມະຫາພາກ ແລະ ອໍານາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບໂຄງການ ໂດຍສະເພາະດ້ານສິ່ງແວດລ້ອມ-ສັງຄົມ ແລະ ການຍົກຍ້າຍຈັດສັນປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການ ແລະ ສະພາບການເຄື່ອນໄຫວທຸລະກິດຂອງ ລຣລ ໃຫ້ຂັ້ນເທິງໄດ້ຮັບຊາບໃນແຕ່ລະໄລຍະຢ່າງເປັນປົກກະຕິ. ການດໍາເນີນທຸລະກິດຂາຍຂີ້ເທົ່າລອຍຈາກໂຄງການໄຟຟ້າຄວາມຮ້ອນຫົງສາຕາມການມອບໝາຍຂອງລັດຖະບານ.



## 2. ວິໃສທັດ

1. ລົງທຶນຢ່າງມີປະສິດທິຜົນ
   Efficient Investment
2. ສ້າງຜົນກຳໄລໃຫ້ໄດ້ຫຼາຍ
   Profit Making
3. ສ້າງຄວາມເຊື່ອຖືຈາກສະຖາບັນການເງິນສາກົນ ແລະ ຜູ້ສະໜອງທຶນ
   Gaining Credibility
4. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຢ່າງຕໍ່ເນື່ອງ
   Capacity Building
5. ບໍລິຫານລາຍຮັບ ແລະ ລາຍຈ່າຍຢ່າງໂປ່ງໃສ
   Transparency in Management of Revenue and Expenditure

## 3. ນະໂຍບາຍລວມຂອງ ລຮລ

ລຮລ: ຕ້ອງເຕີບໃຫຍ່ເຂັ້ມແຂງ

ເພື່ອເປັນກຳລັງແຮງ ທຸລະກິດຂອງລັດ

ສ້າງລາຍຮັບໝັ້ນຄົງ ສ້າງກຳໄລຍືນຍົງ

ສົ່ງມອບລັດຖະບານ



## 4. ເຫດການເດັ່ນ

ການເຄື່ອນໄຫວວຽກງານ ໃນປີ 2019 ໄດ້ຮັບຜົນສຳເລັດດີສົມຄວນ ແລະ ມີຫຼາຍເຫດການເດັ່ນເກີດຂຶ້ນດັ່ງນີ້:

ທ່ານ ປອ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ລົງຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ (11/01/2019)




ທ່ານ ປອ ຄຳມະນີ ອິນທິລາດ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ລົງໂອ້ລົມພະນັກງານ ລຮລ (14/01/2019)



ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ 2018 ແລະ ທິດທາງແຜນການປີ 2019, ທີ່ຫໍປະຊຸມແຫ່ງຊາດ (07/03/2019)




ທ່ານ ປອ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ລົງຢ້ຽມຢາມປະຊາຊົນທີ່ໄດ້ຮັບຜົນກະທົບຈາກຄູກັ້ນນ້ຳ D ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ (12/03/2019)





ກອງປະຊຸມໃຫຍ່ ຄັ້ງທີ IV ຂອງໜ່ວຍພັກຮາກຖານ ລຣລ (14/06/2019)



ທ່ານ ປອ ຄໍາມະນີ ອິນທິລາດ ລັດຖະມົນຕີກະຊວງ ພະລັງງານ ແລະ ບໍ່ແຮ່ ລົງຕິດຕາມຄວາມຄືບໜ້າ ການກໍ່ສ້າງຄູກັ້ນນໍ້າ D ໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (20/08/2019)



ທ່ານ ປອ ບຸນທອງ ຈິດມະນີ ຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາລັດຖະບານ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫລວງຂັ້ນສູນກາງ ລົງຕິດຕາມຄວາມຄືບໜ້າການກໍ່ສ້າງຄູກັ້ນນໍ້າ D ໂຄງການໄຟຟ້າເຊປຽນ-ເຊນໍ້ານ້ອຍ (04/10/2019)



ທ່ານ ອາລຸນແກ້ວ ກິດຕິຄຸນ ລັດຖະມົນຕີ ປະຈໍາ ສໍານັກງານນາຍົກລັດຖະມົນຕີ ລົງຢ້ຽມຢາມ ໂຄງການໄຟຟ້ານໍ້າເທີນ 2 (07/12/2019)

ກອງປະຊຸມສຳມະນາຂີ້ເທົ່າລອຍຫົງສາ ແລະ ຂີ້ເທົ່າຖ່ານຫີນເຂົ້າໃນວຽກງານເບຕົງ (04/10/2019)



ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ລົງຢ້ຽມຢາມໂຄງການໄຟຟ້າຄວາມຮ້ອນຫົງສາ (15/01/2020)



ການເຊັນບົດບັນທຶກການຮ່ວມມືພັດທະນາໂຄງການໄຟຟ້າຄວາມຮ້ອນຖ່ານຫີນ ເມືອງບົວລະພາ, ແຂວງຄຳມ່ວນ (13/12/2019)



**ລາຍຮັບຂອງ ລຣລ ທັງໝົດ 52.740.035 ໂດລາສະຫະລັດ :**

1. ເງິນປັນຜົນໂຄງການນ້ຳເທີນ 2 ຈຳນວນ 10.250.000 ໂດລາສະຫະລັດ
2. ເງິນປັນຜົນໂຄງການໄຟຟ້າຄວາມຮ້ອນຫົງສາ:
   - ພາກໄຟຟ້າ: 36.832.800 ໂດລາສະຫະລັດ
   - ພາກບໍ່ແຮ່: 3.763.888 ໂດລາສະຫະລັດ
3. ລາຍຮັບຈາກການຂາຍຂີ້ເທົ່າລອຍ 1.471.506 ໂດລາສະຫະລັດ.
4. ການສະໜອງບຸກຄະລາກອນໃຫ້ບໍລິສັດໂຄງການ 164.975 ໂດລາສະຫະລັດ.
5. ລາຍຮັບອື່ນໆ ຈຳນວນ 256.866 ໂດລາສະຫະລັດ



ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ທັງໝົດ 40.281.973 ໂດລາສະຫະລັດ:

1. ໂຄງການໄຟຟ້ານ້ຳເທີນ 2 ຈຳນວນ 6.280.990 ໂດລາສະຫະລັດ.
2. ໂຄງການໄຟຟ້າຄວາມຮ້ອນຫົງສາ 29.181.292 ໂດລາສະຫະລັດ.
3. ໂຄງການໄຟຟ້ານ້ຳງຽບ 1 ຈຳນວນ 4.801.255 ໂດລາສະຫະລັດ.
4. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ 18.436 ໂດລາສະຫະລັດ.



ມອບພັນທະໃຫ້ແກ່ລັດຖະບານທັງໝົດ 5.256.542 ໂດລາສະຫະລັດ:

1. ອາກອນເງິນປັນຜົນ 4.907.203 ໂດລາສະຫະລັດ.
2. ອາກອນອື່ນໆ ຈຳນວນ 349.339 ໂດລາສະຫະລັດ.



## ການລົງທຶນ ແລະ ຜົນປະກອບການດ້ານທຸລະກິດ

ການເຄື່ອນໄຫວທຸລະກິດຂອງ ລຮລ ໃນປີ 2019 ແມ່ນປະສົບຜົນສຳເລັດດີສົມຄວນ, ລຮລ ມີລາຍຮັບທັງໝົດ 52.740.035 ໂດລາສະຫະລັດ, ການປະຕິບັດພັນທະຕາມກົດໝາຍ, ການປະກອບທຶນຮຸ້ນ ແລະ ການບໍລິຫານໜີ້ເງິນກູ້ແມ່ນສາມາດປະຕິບັດໄດ້ຢ່າງຄົບຖ້ວນ ແລະ ທັນເວລາ. ນອກຈາກນັ້ນ, ລຮລ ຍັງໄດ້ຖອນເງິນກູ້ຢືມ ເພື່ອປະກອບເປັນທຶນຮຸ້ນ, ຊຳລະດອກເບັ້ຍ ແລະ ຄ່າທຳນຽມຕ່າງໆໃນໂຄງການໄຟຟ້ານ້ຳງຽບ 1 ແລະ ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ 21.770.679 ໂດລາສະຫະລັດ. ພ້ອມດຽວກັນນັ້ນ, ກໍໄດ້ຊຳລະໜີ້ເງິນກູ້ໃນໂຄງການໄຟຟ້ານ້ຳເທີນ 2, ໂຄງການໄຟຟ້າຄວາມຮ້ອນຫົງສາ, ໂຄງການໄຟຟ້ານ້ຳງຽບ 1 ແລະ ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ລວມທັງໝົດ 40.281.973 ໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳເທີນ 2:** ລຮລ ໄດ້ຮັບເງິນປັນຜົນທັງໝົດ 10.250.000 ໂດລາສະຫະລັດ ແລະ ໄດ້ຈ່າຍອາກອນເງິນປັນຜົນ 1.025.000 ໂດລາສະຫະລັດ, ຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 6.280.990 ໂດລາສະຫະລັດ.

ໂຮງຈັກໄຟຟ້າ



**ໂຄງການໄຟຟ້າຄວາມຮ້ອນຫົງສາ:** ລຮລ ໄດ້ຮັບເງິນປັນຜົນທັງໝົດ 40.596.688 ໂດລາສະຫະລັດ, ຊຶ່ງໄດ້ຈາກພາກໂຮງໄຟຟ້າ 36.832.800 ໂດລາສະຫະລັດ ແລະ ໄດ້ຈາກພາກບໍ່ແຮ່ 3.763.888 ໂດລາສະຫະລັດ, ໄດ້ຈ່າຍອາກອນເງິນປັນຜົນ 3.882.203 ໂດລາສະຫະລັດ. ຊຳລະຕົ້ນທຶນ ແລະ ດອກເບັ້ຍໃຫ້ກະຊວງການເງິນຕາມສັນຍາກູ້ຢືມຕໍ່ 29.181.292 ໂດລາສະຫະລັດ.

ໂຮງໄຟຟ້າ



**ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ:** ລຮລ ໄດ້ຖອນເງິນກູ້ເພື່ອມາປະກອບເປັນທຶນຮຸ້ນ ແລະ ຈ່າຍຄ່າທຳນຽມຕ່າງໆຂອງເງິນກູ້ 2.559.258 ໂດລາສະຫະລັດ. ນອກຈາກນັ້ນ, ລຮລ ຍັງໄດ້ຊຳລະດອກເບັ້ຍ 18.436 ໂດລາສະຫະລັດ ແລະ ຊຳລະຄ່າທຳນຽມຕ່າງໆ 553.498 ໂດລາສະຫະລັດ. ສະຫຼຸບແລ້ວ ມາຮອດທ້າຍ ປີ 2019 ລຮລ ໄດ້ຖອນເງິນກູ້ທັງໝົດ 77.244.277 ໂດລາສະ

ເຂື່ອນເຊນ້ຳນ້ອຍ



ຫະລັດ, ໃນນັ້ນໄດ້ຖອນເງິນກູ້ຈາກທະນາຄານກຸງໄທ (KTB) ຈຳນວນ 3.754.861 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 20 ລ້ານໂດລາສະຫະລັດ ແລະ ຖອນຈາກກອງທຶນຮ່ວມມືເພື່ອການພັດທະນາດ້ານເສດຖະກິດ (EDCF) ຈາກ ສ. ເກົາຫຼີ 73.489.416 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 80,80 ລ້ານໂດລາສະຫະລັດ.

**ໂຄງການໄຟຟ້ານ້ຳງຽບ 1**: ລຮລ ໄດ້ຖອນເງິນກູ້ເພື່ອມາປະກອບເປັນທຶນຮຸ້ນ ແລະ ຈ່າຍຄ່າທຳນຽມຕ່າງໆຂອງເງິນກູ້ຈຳນວນ 18.463.065 ໂດລາສະຫະລັດ. ພ້ອມກັນນັ້ນ, ລຮລ ຍັງໄດ້ນຳໃຊ້ເງິນ 194.858,18 ໂດລາສະຫະລັດ ເພື່ອຊຳລະດອກເບ້ຍ ແລະ ຄ່າທຳນຽມຕ່າງໆ. ສະຫຼຸບແລ້ວ ມາຮອດທ້າຍປີ 2019 ລຮລ ໄດ້ຖອນເງິນກູ້ທັງໝົດ 91.368.817 ໂດລາສະຫະລັດ ຂອງມູນຄ່າກູ້ຢືມທັງໝົດ 103,5 ລ້ານໂດລາສະຫະລັດ. ໃນນັ້ນ ໄດ້ຖອນເງິນກູ້ຈາກທະນາຄານຍີ່ປຸ່ນ ເພື່ອການຮ່ວມມືສາກົນ (JBIC), ທະນາຄານເພື່ອການນຳເຂົ້າ-ສົ່ງອອກປະເທດໄທ (Thai EXIM Bank) ແລະ ທະນາຄານກຸງເທບ (BBL) ພາກສ່ວນລະ 30,46 ລ້ານໂດລາສະຫະລັດ.

**ເຂື່ອນໃຫຍ່**



**ເຂື່ອນນ້ອຍ**



**ທຸລະກິດຂີ້ເທົ່າລອຍ**: ຮອດທ້າຍປີ 2019 ລຮລ ມີສັນຍາຊື້-ຂາຍຂີ້ເທົ່າລອຍກັບ 8 ບໍລິສັດ ແລະ ໄດ້ຂາຍຂີ້ເທົ່າລອຍທັງໝົດ 351.464 ໂຕນ ເປັນເງິນ 1.471.506 ໂດລາສະຫະລັດ.

**ລົດລູກຄ້າມາຮັບເອົາຂີ້ເທົ່າລອຍ**





## ກົງຈັກການຈັດຕັ້ງຂອງ ລຮລ

ລຮລ ມີສະພາບໍລິຫານ, ຄະນະອຳນວຍການ, ພະແນກບໍລິຫານ ແລະ ບັນຊີ-ການເງິນ, ພະແນກທຸລະກິດ-ແຜນການ, ພະແນກໂຄງການ, ພະແນກທຸລະກິດຂີ້ເທົ່າລອຍ ແລະ ຫ້ອງການກວດສອບພາຍໃນ, ຕາມແຜນວາດຂ້າງລຸ່ມນີ້:



## ສະພາບໍລິຫານຂອງ ລຮລ

ສະພາບໍລິຫານປະກອບມີ 5 ທ່ານທີ່ຕາງໜ້າໃຫ້ຂະແໜງການກ່ຽວຂ້ອງຄື: ປະທານສະພາບໍລິຫານມາຈາກກະຊວງການເງິນ, ຮອງປະທານສະພາບໍລິຫານມາຈາກກະຊວງພະລັງງານ ແລະ ບໍ່ແຮ່, ກຳມະການສະພາບໍລິຫານ 1 ທ່ານມາຈາກກະຊວງແຜນການ ແລະ ການລົງທຶນ ແລະ ຈາກ ລຮລ 2 ທ່ານ.



**ທ່ານ ນາງ ທິບພະກອນ ຈັນທະວົງສາ**

**ປະທານສະພາບໍລິຫານ**

ຮອງລັດຖະມົນຕີກະຊວງການເງິນ



**ທ່ານ ສົມພິດ ແກ້ວວິຈິດ**

**ຮອງປະທານສະພາບໍລິຫານ**

ຫົວໜ້າກົມທຸລະກິດພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່



**ທ່ານ ນາງ ທຳມາ ເພັດວິໄຊ**

**ກຳມະການ**

ຫົວໜ້າຫ້ອງການກະຊວງແຜນການ ແລະ ການລົງທຶນ



**ທ່ານ ມານະສິນ ວົງໄຊ**

ກຳມະການ

ຜູ້ອຳນວຍການ ລຮລ



**ທ່ານ ສົມສັກ ສີຊົມພູ**

ກຳມະການ

ຕົວແທນພະນັກງານ ລຮລ




ໃນປີ 2019, ລຮລ ມີພະນັກງານທັງໝົດ 112 ຄົນ (ຍິງ 32 ຄົນ), ປະຈຳຢູ່ນະຄອນຫຼວງວຽງຈັນ 63 ຄົນ, 1 ຄົນເຮັດວຽກໃນຕຳແໜ່ງຄະນະບໍລິຫານບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍ, 8 ຄົນ ເປັນພະນັກງານຄຸ້ມຄອງ ແລະ ບັນຊາເຂື່ອນໄຟຟ້ານ້ຳເທີນ 2, ເຮັດວຽກກັບບໍລິສັດໄຟຟ້າທົ່ງສາ 4 ຄົນ ແລະ ປະຈຳການຢູ່ຫ້ອງການຂີ້ເທົ່າລອຍພາກສະໜາມທົ່ງສາ 35 ຄົນ.

### ການຂະຫຍາຍຕົວຂອງພະນັກງານ ລຮລ (ແຕ່ປີ 2005-2019)



## ການຈັດຕັ້ງປະຕິບັດໂຄງການ

### 1. ໂຄງການໄຟຟ້ານ້ຳເທີນ 2

ໂຄງການໄຟຟ້ານ້ຳເທີນ 2 ຕັ້ງຢູ່ເມືອງນາກາຍ (ເຂື່ອນໃຫຍ່) ແລະ ເມືອງຍົມມະລາດ (ໂຮງຈັກໄຟຟ້າ) ແຂວງຄຳມ່ວນ, ລວມກຳລັງຕິດຕັ້ງທັງໝົດ 1.080 MW ແລະ ມີມູນຄ່າການກໍ່ສ້າງໂຄງການທັງໝົດ 1.297 ລ້ານໂດລາສະຫະລັດ. ໂຄງການໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມຜະລິດກະແສໄຟຟ້າຂາຍຢ່າງເປັນທາງການໃນເດືອນເມສາ 2010.

**ເຂື່ອນໃຫຍ່ນາກາຍ**



ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດໄຟຟ້າຝຣັ່ງຖືຮຸ້ນນ້ຳເທີນ (EDF NTH), ບໍລິສັດຜະລິດໄຟຟ້າຈຳກັດມະຫາຊົນ (EGCO) ແລະ ລັດວິສາຫະກິດຖືຮຸ້ນລາວ.

**ບັນດາຂາຮຸ້ນໃນໂຄງການ**



ການຜະລິດໄຟຟ້າຂອງໂຄງການໃນປີນີ້ແມ່ນບໍ່ສາມາດບັນລຸຕາມແຜນການທີ່ໄດ້ກຳນົດໄວ້ ເນື່ອງຈາກໄດ້ຢຸດການຜະລິດໄຟຟ້າຫຼາຍຄັ້ງ ຄື: ໃນຊ່ວງຕົ້ນເດືອນ 9/2019 ມີຝົນຕົກໜັກເຮັດໃຫ້ລະດັບນ້ຳເຊບັ້ງໄຟຂຶ້ນສູງເກີນ 14,40 ແມັດ, ອີງຕາມສັນຍາສຳປະທານລະຫວ່າງໂຄງການ ແລະ ລັດຖະບານແມ່ນຕ້ອງໄດ້ຢຸດການຜະລິດໄຟຟ້າ, ໃນຊ່ວງທ້າຍເດືອນ 10 ຫາກາງ ເດືອນ 11 ປີ 2019 ໄດ້ຢຸດການຜະລິດໄຟຟ້າ ເພື່ອສ້ອມແປງຄອງສົ່ງນ້ຳທ້າຍເຮືອນຈັກໄຟຟ້າທີ່ມີການຮົ່ວໄຫຼລົງສູ່ສາຍນ້ຳຍົມ. ສະຫຼຸບແລ້ວໃນປີ 2019 ສາມາດຜະລິດໄຟຟ້າໄດ້ທັງໝົດ 5.756 GWh ເທົ່າ 98.29% ຂອງແຜນປີ ເປັນເງິນ 269.050.047 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້ ກຟຜ ຈຳນວນ 5.510 GWh ເປັນເງິນ 258.276.891 ໂດລາສະຫະລັດ, ຂາຍໃຫ້ ຟຟລ 246 GWh ເປັນເງິນ 10.773.157 ໂດລາສະຫະລັດ.

**ພະລັງງານໄຟຟ້າຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2019)**




**ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2010 ຫາ 2019)**



ໃນປີ 2019 ລັດຖະບານໄດ້ຮັບເງິນຄ່າພາກຫຼວງ ຈຳນວນ 12.811.269 ໂດລາສະຫະລັດ ແລະ ອາກອນກຳໄລ 8.074.478 ໂດລາສະຫະລັດ ຈາກບໍລິສັດໄຟຟ້ານ້ຳເທີນ 2.

### ລາຍຮັບຂອງລັດຖະບານຈາກຄ່າພາກຫຼວງ ແລະ ອາກອນກຳໄລໃນໂຄງການໄຟຟ້ານ້ຳເທີນ 2 (ແຕ່ປີ 2010 ຫາ 2019)




### ຫ້ອງຄວບຄຸມການຜະລິດໄຟຟ້າ



## 2. ໂຄງການໄຟຟ້າຄວາມຮ້ອນຫົງສາ

ໂຄງການໄຟຟ້າຄວາມຮ້ອນຫົງສາ ຕັ້ງຢູ່ເມືອງຫົງສາ ແຂວງໄຊຍະບູລີ, ເປັນໂຄງການທີ່ຜະລິດໄຟຟ້າດ້ວຍຄວາມຮ້ອນ ໂດຍນຳໃຊ້ຖ່ານຫີນລິກໄນ (Lignite) ເປັນເຊື້ອໄຟ, ມີກຳລັງຕິດຕັ້ງ 1.878 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດແມ່ນ 3.710 ລ້ານໂດລາສະຫະລັດ.

**ໂຮງໄຟຟ້າ**



ບໍລິສັດໄຟຟ້າຫົງສາ ຈຳກັດ ປະກອບດ້ວຍ 3 ຂາຮຸ້ນຄື: ບໍລິສັດບ້ານປູ (BANPU) ປະເທດໄທ, ບໍລິສັດ ອາເອຊ ອິນເຕີເນຊັນແນວ (ສິງກະໂປ) ຄໍປໍເຣຊັນ ຈຳກັດ (RH International Singapore Corporation Pte, Ltd) ແລະ ລັດວິສາຫະກິດຖືຮຸ້ນລາວ.

**ບັນດາຂາຮຸ້ນໃນໂຄງການ**



ໃນປີ 2019 ການຜະລິດໄຟຟ້າແມ່ນບໍ່ສາມາດບັນລຸຕາມແຜນທີ່ວາງໄວ້ ເນື່ອງຈາກເກີດເຫດແຜ່ນດິນໄຫວໃນວັນທີ 21/11/2019, ສະນັ້ນທາງໂຄງການຈໍາເປັນໄດ້ຢຸດການຜະລິດໄຟຟ້າຫຼາຍມື້ ເພື່ອກວດສອບ ແລະ ສ້ອມແປງສ່ວນທີ່ໄດ້ຮັບຜົນກະທົບ. ສະຫຼຸບແລ້ວ ໃນປີ 2019 ສາມາດຜະລິດໄຟຟ້າໄດ້ທັງໝົດ 11.406 GWh ເທົ່າກັບ 95,90% ຂອງແຜນປີ. ເປັນເງິນ 662.996.535 ໂດລາສະຫະລັດ. ໃນນັ້ນ, ຂາຍໃຫ້ ກຟຜ ຈໍານວນ 10.747 GWh, ເປັນເງິນ 629.379.622 ໂດລາສະຫະລັດ, ຂາຍໃຫ້ ຟຟລ 659 GWh ເປັນເງິນ 33.616.913 ໂດລາສະຫະລັດ. ໂດຍໄດ້ນໍາໃຊ້ຖ່ານຫີນ 14.387.454 ໂຕນ, ຫີນປູນ 258.278 ໂຕນ.

**ພະລັງງານໄຟຟ້າທີ່ຂາຍໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2019)**




**ລາຍຮັບຈາກການຂາຍພະລັງງານໄຟຟ້າໃຫ້ ກຟຜ ແລະ ຟຟລ (ແຕ່ປີ 2015 ຫາ 2019)**



ໃນປີ 2019 ລັດຖະບານມີລາຍຮັບຈາກຄ່າພາກຫຼວງ 10.645.406 ໂດລາສະຫະລັດ ແລະ ຄ່າທຳນຽມການນຳໃຊ້ແຮ່ທາດ 15.376.912 ໂດລາສະຫະລັດ ຈາກໂຄງການໄຟຟ້າຄວາມຮ້ອນຫົງສາ.

**ລາຍຮັບຂອງລັດຖະບານຈາກຄ່າພາກຫຼວງ ແລະ ຄ່າທຳນຽມການນຳໃຊ້ແຮ່ທາດ**
**(ແຕ່ປີ 2015 ຫາ 2019)**




ນອກຈາກນັ້ນ, ບໍລິສັດໂຄງການຍັງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ ແລະ ວຽກງານສິ່ງແວດລ້ອມ-ສັງຄົມໃນເຂດໂຄງການໃຫ້ດີທີ່ສຸດ ໂດຍສະເພາະວຽກງານຊົດເຊີຍ ແລະ ພັນທະຫຼັງການຍົກຍ້າຍປະຊາຊົນທັງໝົດ 450 ຄອບຄົວ ໃນ 5 ບ້ານ, ເອົາໃຈໃສ່ດ້ານການສຶກສາ, ສາທາລະນະສຸກ ແລະ ການສ້າງອາຊີບທີ່ຖາວອນ ເພື່ອພັດທະນາຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໃຫ້ນັບມື້ນັບດີຂຶ້ນເທື່ອລະກ້າວ. ພ້ອມດຽວກັນນັ້ນ, ໂຄງການຍັງໄດ້ປະຕິບັດຫຼາຍກິດຈະກຳຮ່ວມກັບຊຸມຊົນໃນທ້ອງຖິ່ນ ແລະ ໄດ້ຕິດຕາມກວດກາມາດຕະຖານດ້ານສິ່ງແວດລ້ອມໃນເຂດກໍ່ສ້າງຢ່າງເປັນປະຈຳ ເພື່ອຮັບປະກັນບໍ່ໃຫ້ເກີດມີຜົນກະທົບຕໍ່ຊຸມຊົນໃນເຂດດັ່ງກ່າວ.

**ກິດຈະກຳຕ່າງໆກ່ຽວກັບການສ້າງວຽກເຮັດງານທຳຂອງປະຊາຊົນພາຍຫຼັງມີໂຄງການ**



## 3. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ

ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ຕັ້ງຢູ່ພາກໃຕ້ຂອງ ສປປ ລາວ, ເຂດຕິດຈອດລະຫວ່າງສອງແຂວງ ຄື: ແຂວງຈຳປາສັກ ແລະ ແຂວງອັດຕະປື ຊຶ່ງຕັນນ້ຳຈາກແມ່ນ້ຳສາມສາຍ ຄື: ເຊປຽນ, ເຊນ້ຳນ້ອຍ ແລະ ຫ້ວຍໝາກຈັນ ເພື່ອມາຮັບໃຊ້ການຜະລິດໄຟຟ້າ. ມີກຳລັງຕິດຕັ້ງທັງໝົດ 410 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດ 1.090 ລ້ານໂດລາສະຫະລັດ.

ໂຮງຈັກ ແລະ ສະຖານີໄຟຟ້າ



ເຂື່ອນເຊປຽນ



ບໍລິສັດໄຟຟ້າເຊປຽນ-ເຊນ້ຳນ້ອຍຈຳກັດ (PNPC) ປະກອບມີ 4 ຂາຮຸ້ນ ຄື: ບໍລິສັດ SK Engineering and Construction Co., Ltd (SK E&C) ຈາກ ສ.ເກົາຫຼີ, ບໍລິສັດ KOREA WESTERN POWER Co., Ltd (KOWEPO) ຈາກ ສ.ເກົາຫຼີ, RATCH Group ຈາກປະເທດໄທ ແລະ ລັດວິສາຫະກິດຖືຮຸ້ນລາວ.

ບັນດາຂາຮຸ້ນໃນໂຄງການ



ພາຍຫຼັງເກີດເຫດການຄູກັ້ນນ້ຳ D (Saddle Dam D) ແຕກພັງໃນເດືອນ ກໍລະກົດ ປີ 2018 ເຮັດໃຫ້ເກີດມີຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນຢ່າງຫຼວງຫຼາຍ. ຕໍ່ສະພາບການດັ່ງກ່າວ ບໍລິສັດໂຄງການພ້ອມກັບບັນດາຂາຮຸ້ນໄດ້ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ສຸມໃສ່ວຽກງານບັນເທົາທຸກ, ຊ່ວຍເຫຼືອຊຸກຍູ້-ສະໜັບສະໜູນ ແລະ ຊົດເຊີຍໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຫດການດັ່ງກ່າວດ້ວຍຄວາມເອົາໃຈໃສ່ ເພື່ອຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ ເຊັ່ນ: ການກໍ່ສ້າງທີ່ພັກຊົ່ວຄາວ ແລະ ພື້ນຖານໂຄງລ່າງ, ຊຶ່ງປະກອບມີ 5 ສູນຄື: 1) ສູນບ້ານຫາດຍາວ, 2) ສູນດົງບາກ, 3) ສູນຕະມໍຢອດ, 4) ສູນດອນບົກ, 5) ສູນປິ່ນດົງ. ມາຮອດປັດຈຸບັນ ໄດ້ສໍາເລັດການກໍ່ສ້າງ ແລະ ປະຊາຊົນໄດ້ຍ້າຍໄປຢູ່ທັງໝົດແລ້ວ, ວຽກການກໍ່ສ້າງທີ່ຢູ່ອາໄສຖາວອນ ແລະ ພື້ນຖານໂຄງລ່າງເປັນຕົ້ນແມ່ນການຈັດສັນເນື້ອທີ່ສໍາລັບເຂດດິນປຸກສ້າງທີ່ຢູ່ອາໄສຖາວອນເນື້ອທີ່ 306 ເຮັກຕາ, ກວມເອົາ 4 ເຂດ ຄື: 1) ດົງບາກ, 2) ດອນບົກ, 3) ຕະມໍຢອດ ແລະ 4) ປິ່ນດົງ, ຊຶ່ງວຽກບຸກເບີກພື້ນທີ່ ແລະ ເກັບກູ້ລະເບີດສໍາເລັດ 100%. ວຽກບຸກເບີກ-ອະນາໄມພື້ນທີ່ ແລະ ວຽກເກັບກູ້ລະເບີດໃນເນື້ອທີ່ດິນກະສິກໍາໃໝ່ 4 ເຂດ ເນື້ອທີ່ 1.750 ເຮັກຕາ ກໍ່ໄດ້ສໍາເລັດການເກັບກູ້ລະເບີດເຊັ່ນກັນ ແລະ ສືບຕໍ່ອະນາໄມພື້ນທີ່ເຂດບ້ານຫີນລາດ, ເຂດບ້ານທ່າແສງຈັນ, ເຂດບ້ານສະໝອງໃຕ້, ເຂດບ້ານດົງບາກ. ນອກນັ້ນ, ລັດຖະບານຍັງໄດ້ອະນຸມັດດິນຕື່ມອີກ 390 ເຮັກຕາ, ລວມເນື້ອທີ່ດິນກະສິກໍາທັງໝົດທີ່ໄດ້ມອບໃຫ້ປະຊາຊົນຈໍານວນ 2.140 ເຮັກຕາ. ການເຈລະຈາລະຫວ່າງ ລັດຖະບານ ແລະ ບໍລິສັດໂຄງການກ່ຽວກັບການຊົດເຊີຍປະຊາຊົນໄດ້ຮັບຜົນກະທົບ ແລະ ແຜນຟື້ນຟູ (Master Plan) ໄດ້ບັນລຸຂໍ້ຕົກລົງງົບປະມານຈໍານວນ 93,2 ລ້ານໂດລາສະຫະລັດ. ຄຽງຄູ່ກັບວຽກງານດັ່ງກ່າວ ໂຄງການກໍ່ໄດ້ສຸມໃສ່ການກໍ່ສ້າງຄູກັ້ນນ້ຳ D ຄືນໃໝ່ (RCC Dam) ແລະ ເສີມຄວາມແຂງແກ່ນຂອງຄູກັ້ນນ້ຳ E ແລະ F ເພື່ອຮັບປະກັນບໍ່ໃຫ້ເຫດການດັ່ງກ່າວເກີດຂຶ້ນອີກ. ສະນັ້ນ, ຈຶ່ງເຮັດໃຫ້ມື້ຂາຍໄຟຟ້າຢ່າງເປັນທາງການ (COD) ເລື່ອນຈາກແຜນການທີ່ໄດ້ກໍານົດໄວ້ໃນຕົ້ນເດືອນ 2 ປີ 2019 ມາສໍາເລັດ ແລະ ຜະລິດໄຟຟ້າຂາຍຢ່າງເປັນທາງການໄດ້ ໃນວັນທີ 6/12/2019. ໃນປີ 2019 ໂຄງການສາມາດຜະລິດໄຟຟ້າໄດ້ 62,13 GWh.

ການມອບເງິນຊົດເຊີຍໃຫ້ຄອບຄົວທີ່ມີຜູ້ເສຍຊີວິດ



ຄູກັ້ນນ້ຳ D ໃໝ່



## 4. ໂຄງການໄຟຟ້ານ້ຳງຽບ 1

ໂຄງການໄຟຟ້ານ້ຳງຽບ 1 ຕັ້ງຢູ່ເມືອງບໍລິຄັນ, ແຂວງບໍລິຄຳໄຊ ຫ່າງຈາກທາງເລກທີ 13 ໃຕ້ ປະມານ 40 km, ມີກຳລັງຕິດຕັ້ງທັງໝົດ 290 MW ແລະ ມີມູນຄ່າກໍ່ສ້າງໂຄງການທັງໝົດແມ່ນ 966 ລ້ານໂດລາສະຫະລັດ. ບໍລິສັດໄຟຟ້ານ້ຳງຽບ 1 ຈຳກັດ (NNP1PC), ຊຶ່ງປະກອບດ້ວຍ 3 ຂາຮຸ້ນ ຄື: ບໍລິສັດ KPIC Netherlands B.V (Kansai), ບໍລິສັດ EGAT International ແລະ ລັດວິສາຫະກິດ ຖືຮຸ້ນລາວ.

### ບັນດາຂາຮຸ້ນໃນໂຄງການ




ການກໍ່ສ້າງໂຄງການແມ່ນສຳເລັດ ແລະ ໄດ້ຜະລິດໄຟຟ້າຂາຍຢ່າງເປັນທາງການ (COD) ວັນທີ 06/09/2019. ໃນປີ 2019 ໂຄງການສາມາດຜະລິດໄຟຟ້າໄດ້ 331,75 GWh. ໃນນັ້ນ, ຂາຍໃຫ້ ກຟຜ ຈຳນວນ 317 GWh, ຂາຍໃຫ້ ຟຟລ 14,75 GWh.

ສັນເຂື່ອນໃຫຍ່



ເຂື່ອນນ້ອຍ ແລະ ໂຮງຈັກໄຟຟ້າ 18 MW



ວຽກງານດ້ານສິ່ງແວດລ້ອມ-ສັງຄົມ: ໂຄງການໄດ້ສືບຕໍ່ຕິດຕາມ-ກວດກາຜົນກະທົບດ້ານສິ່ງແວດລ້ອມ ຈາກການກໍ່ສ້າງຢູ່ພາກສະໜາມເປັນປະຈຳ ເປັນຕົ້ນແມ່ນການຕິດຕາມກວດກາຄຸນະພາບນ້ຳ, ການກຳຈັດຂີ້ເຫຍື້ອ, ມົນລະພິດທາງອາກາດ, ມົນລະພິດທາງສຽງ. ນອກຈາກນັ້ນ, ໂຄງການໄດ້ສຳເລັດການຊົດເຊີຍໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບໃນເຂດເຂດ 3 (ຄຸ້ມຫາດຊາຍຄຳ), ເຂດ 5 (ເຂດຫ້ວຍສູບ), ເຂດອ່າງເກັບ

ນ້ຳຕອນລຸ່ມ 2LR, ເຂດອ່າງເກັບນ້ຳຕອນເທິງ 2UR ແລະ ເຂດ 4 (ເຂດລຸ່ມເຮືອນຈັກ). ສ່ວນເຂດແລວສາຍສົ່ງ 230 kV ໄດ້ຊົດເຊີຍທີ່ດິນ, ສິ່ງປຸກສ້າງ ແລະ ຊັບສິນຕ່າງໆຂອງປະຊາຊົນເທົ່າກັບ 98,48%.

ການກວດກາຄຸນະພາບນ້ຳ



ການເຜີຍແຜ່ວຽກສຸກຂະສຶກສາໃຫ້ແກ່ນັກຮຽນ



ການປູກຜັກເປັນສິນຄ້າຂອງປະຊາຊົນ



ການຝຶກອາຊີບໃຫ້ແກ່ປະຊາຊົນ



ບ້ານຈັດສັນຍົກຍ້າຍພູໂຮມໄຊ



## 5. ໂຄງການທຸລະກິດຂີ້ເທົ່າລອຍ

ໃນເດືອນ 7 ປີ 2019 ກະຊວງວິທະຍາສາດ ແລະ ເຕັກໂນໂລຊີໄດ້ອອກຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ມາດຕະຖານແຫ່ງຊາດ ກ່ຽວກັບຜະລິດຕະພັນຂີ້ເທົ່າລອຍຈາກຖ່ານຫີນໃນໂຄງການໄຟຟ້າຄວາມຮ້ອນຫົງສາ ສໍາລັບໃຊ້ເປັນວັດສະດຸປະສົມເບຕົງ, ມລ 442-2019 1600/ກມວ. ນອກຈາກນັ້ນ, ລຮລ ຮ່ວມກັບມະຫາວິທະຍາໄລແຫ່ງຊາດລາວ ແລະ ສູນຄົ້ນຄ້ວາເຕັກໂນໂລຊີການກໍ່ສ້າງ ແລະ ສ້ອມແປງ (CONTEC) ທີ່ຂຶ້ນກັບສະຖາບັນເຕັກໂນໂລຊີນາໆຊາດສິຣິນທອນ (SIIT) ມະຫາວິທະຍາໄລທໍາມະສາດແຫ່ງປະເທດໄທ ໄດ້ຈັດສໍາມະນາການນໍາໃຊ້ຂີ້ເທົ່າລອຍຫົງສາ (Effective Utilization of Hongsa Fly Ash) ຢູ່ມະຫາວິທະຍາໄລແຫ່ງຊາດລາວ ວິທະຍາເຂດໂສກປ່າຫຼວງ. ໃນປີ 2019 ລຮລ ໄດ້ຈໍາໜ່າຍຂີ້ເທົ່າລອຍໃຫ້ 8 ບໍລິສັດທີ່ມີສັນຍາຊື້-ຂາຍຂີ້ເທົ່າລອຍຄື: ໂຮງງານຊີມັງໄຊຍະບູລີ, ບໍລິສັດວຽງແກ້ວ, ໂຮງງານປຸງແຕ່ງ ແລະ ປັບປຸງຄຸນະພາບເທົ່າລອຍ, ບໍລິສັດ M-Fly ash, ບໍລິສັດວັດທະນາກິດຈະເລີນ, ບໍລິສັດຈິນຊິງຫາວຢູນການຄ້າ ຈໍາກັດ, ບໍລິສັດກາວເສີ້ງລາວບໍ່ເຕນ ຈໍາກັດ ແລະ ບໍລິສັດລາວຫົງສຽງການຄ້າສາກົນ ຈໍາກັດ, ຊຶ່ງສາມາດຈໍາໜ່າຍໄດ້ທັງໝົດ 351.464 ໂຕນ ເປັນເງິນ 1.471.506 ໂດລາສະຫະລັດ.

**ສະຖານທີ່ຮັບຂີ້ເທົ່າລອຍ**



**ໃບຢັ້ງຢືນ ມລ 442-2019 1600/ກມວ**



Construction & Maintenance Technology Research Center (CONTEC)
สถาบันเทคโนโลยีนานาชาติสิรินธร มหาวิทยาลัยธรรมศาสตร์
ตู้ ปณ. 22 ปทจ. ธรรมศาสตร์รังสิต จังหวัดปทุมธานี 12121
โทรศัพท์ : 0-2986-9009 ต่อ 3408
แฟกซ์ : 0-2986-9009 ต่อ 3410

CONTEC

CERTIFICATION

September 14, 2018

To whom it may concern

This is to certify that fly ash samples from Hongsa Power Plant (sampling on February 17, 2017) were tested at Construction and Maintenance Technology Research Center (CONTEC), Sirindhorn International Institute of Technology (SIIT), Thammasat University. Their qualities are equivalent to that of fly ashes in Thailand and satisfy with TIS 2135. Therefore, this is to confirm that fly ash from Hongsa Power Plant can be used in concrete if their qualities are satisfied with TIS 2135.

Certified by

(Professor Dr. Somnuk Tangtermsirikul)

Head of CONTEC and Acting Director
Sirindhorn International Institute of Technology
Thammasat University

**ກອງປະຊຸມສໍາມະນາ ກ່ຽວກັບ ການນໍາໃຊ້ຂີ້ເທົ່າລອຍຫົງສາ ແລະ ຂີ້ເທົ່າຖ່ານຫີນເຂົ້າໃນວຽກງານເບຕົງ**



## 6. ໂຄງການໃໝ່ຢູ່ໃນແຜນຮ່ວມພັດທະນາ

ໃນວັນທີ 13/12/2019 ລຣລ ໄດ້ເຊັນບົດບັນທຶກການຮ່ວມມືກັບບໍລິສັດລ້ານຊ້າງອະສັງຫາລິມະຊັບ ແລະ ພັດທະນາພະລັງງານ ຈຳກັດ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາໂຄງການໄຟຟ້າພະລັງງານຄວາມຮ້ອນຖ່ານຫີນ ເມືອງບົວລະພາ ແຂວງຄຳມ່ວນ ມີກຳລັງຕິດຕັ້ງປະມານ 2.000 MW ສາມາດຜະລິດກະແສໄຟຟ້າໄດ້ປະມານ 14.865 GWh ຕໍ່ປີ. ນອກຈາກນັ້ນ, ລັດຖະບານໄດ້ມີແຈ້ງການ ສະບັບເລກທີ 1359/ຫສນຍ ລົງວັນທີ 12/8/2019 ໃຫ້ ລຣລ ສຶກສາເບິ່ງຄວາມເປັນໄປໄດ້ ແລະ ປະສິດທິຜົນຂອງໂຄງການ ເພື່ອເຂົ້າຮ່ວມຖືຮຸ້ນໃນໂຄງການໄຟຟ້າຕາມລຳແມ່ນ້ຳຂອງຈຳນວນໜຶ່ງ.

ການເຊັນບົດບັນທຶກການຮ່ວມມືພັດທະນາໂຄງການໄຟຟ້າຄວາມຮ້ອນຖ່ານຫີນ ເມືອງບົວລະພາ



ຮູບແບບຈຳລອງໂຄງການໂຮງໄຟຟ້າພະລັງງານຄວາມຮ້ອນຖ່ານຫີນບົວລະພາ ແຂວງຄຳມ່ວນ



## ການບໍລິຫານແລະ ການປະຕິບັດສັນຍາໂຄງການ

ການປະຕິບັດບັນດາສັນຍາໂຄງການທີ່ພົວພັນກັບ ລຣລ ໂດຍກົງແມ່ນເຮັດໄດ້ດີ ເປັນຕົ້ນແມ່ນສັນຍາດ້ານການເງິນ ເຊັ່ນ: ການຖອກເງິນຮຸ້ນເຂົ້າໃນການກໍ່ສ້າງໃນແຕ່ລະໂຄງການພ້ອມການຊໍາລະຄ່າທໍານຽມເງິນກູ້, ການປະຕິບັດສັນຍາຜູ້ຖືຮຸ້ນ ແລະ ສັນຍາອື່ນໆຕໍ່ຜູ້ສະໜອງເງິນກູ້, ຊຶ່ງສາມາດປະຕິບັດໄດ້ຢ່າງຄົບຖ້ວນ ແລະ ທັນຕາມແຜນເວລາທີ່ກໍານົດໄວ້. ໃນປີ 2019 ລຣລ ໄດ້ຊໍາລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຢືມຕໍ່ຈາກກະຊວງການເງິນຈໍານວນ 40.281.973 ໂດລາສະຫະລັດ. ນອກຈາກນີ້, ໄດ້ປະກອບທຶນຮຸ້ນ 18.293.201 ໂດລາສະຫະລັດ ແລະ ໄດ້ຈ່າຍຄ່າທໍານຽມຕ່າງໆ 3.478.594 ໂດລາສະຫະລັດ.

**ການຊໍາລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້ານໍ້າເທີນ 2**
**(ແຕ່ປີ 2011 ຫາ 2019)**




**ການຊໍາລະຕົ້ນທຶນ ແລະ ດອກເບ້ຍໃຫ້ກະຊວງການເງິນໃນໂຄງການໄຟຟ້າຫົງສາ**
**(ແຕ່ປີ 2016 ຫາ 2019)**



ການຖອກທຶນຮຸ້ນ ແລະ ການຈ່າຍຄ່າທຳນຽມຕ່າງໆ (ແຕ່ປີ 2005 ຫາ 2019)




## ການປະຕິບັດພັນທະຕາມກົດໝາຍ

ໃນປີ 2019 ລຣລ ໄດ້ເອົາໃຈໃສ່ຢ່າງເຂັ້ມງວດໃນການປະຕິບັດພັນທະຕໍ່ລັດຖະບານຕາມກົດໝາຍ ແລະ ທັນຕາມກຳນົດເວລາ ເຊັ່ນ: ການຈ່າຍອາກອນເງິນປັນຜົນ ຈຳນວນ 4.907.203 ໂດລາສະຫະລັດ ແລະ ຈ່າຍອາກອນອື່ນໆ 349.339 ໂດລາສະຫະລັດ. ລວມທັງໝົດຈຳນວນ 5.256.541 ໂດລາສະຫະລັດ.

ການປະຕິບັດພັນທະຕ່າງໆໃຫ້ແກ່ລັດຖະບານ (ແຕ່ປີ 2011 ຫາ 2019)



## ການບໍລິຫານລາຍຮັບ-ລາຍຈ່າຍ

ລຣລ ໄດ້ເອົາໃຈໃສ່ບໍລິຫານລາຍຮັບ-ລາຍຈ່າຍດ້ວຍຄວາມໂປ່ງໃສຕາມລະບຽບການຢ່າງເຂັ້ມງວດ, ໂດຍມີການກວດສອບຈາກຫ້ອງການກວດສອບພາຍໃນຂອງຕົນປະຈຳທຸກໆໄຕມາດ, ຖືກກວດສອບຈາກອົງການກວດສອບແຫ່ງລັດ ແລະ ຖືກກວດສອບໂດຍບໍລິສັດກວດສອບພາຍນອກ (PwC) ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ ເພື່ອສົ່ງບົດລາຍງານທາງດ້ານການເງິນໃຫ້ແກ່ບັນດາທະນາຄານຜູ້ສະໜອງທຶນຕາມພັນທະສັນຍາ. ໃນປີ 2019 ລຣລ ມີລາຍຮັບທັງໝົດ 439,67 ຕື້ກີບ ແລະ ມີລາຍຈ່າຍທັງໝົດ 287,53 ຕື້ກີບ.

ສົມທຽບລາຍຮັບ-ລາຍຈ່າຍບໍລິຫານສະສົມຂອງ ລຣລ (ແຕ່ປີ 2015 ຫາ 2019)




## ການພັດທະນາບຸກຄະລາກອນ ແລະ ອົງກອນ

ລຣລ ໄດ້ຖືສຳຄັນການພັດທະນາລະດັບຄວາມຮູ້-ຄວາມສາມາດຂອງພະນັກງານ ໂດຍໄດ້ແນໃສ່ວຽກງານວິຊາສະເພາະທີ່ພົວພັນກັບທຸລະກິດຂອງຕົນ ຜ່ານການຖ່າຍທອດຄວາມຮູ້ ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນດ້ວຍການຈັດຝຶກອົບຮົມພາຍໃນຢ່າງເປັນປະຈຳ. ພ້ອມດຽວກັນນັ້ນ ລຣລ ຍັງໄດ້ສົ່ງພະນັກງານໄປຍົກລະດັບປະລິນຍາໂທທັງພາຍໃນ ແລະ ຕ່າງປະເທດ 4 ຄົນ (1 ຄົນຢູ່ ສສ ຫວຽດນາມ ແລະ ອີກ 1 ຄົນຢູ່ ສປ ຈີນ ແລະ ພາຍໃນ 2 ຄົນ), ສົ່ງໄປຍົກລະດັບພາສາອັງກິດທີ່ສະຖາບັນການຕ່າງປະເທດ ກະຊວງການຕ່າງປະເທດ 2 ຄົນ. ນອກຈາກນັ້ນ, ລຣລ ກໍ່ໄດ້ສົ່ງພະນັກງານເຂົ້າຮ່ວມການສຳມະນາ ແລະ ການຝຶກອົບຮົມນຳພາກສ່ວນອື່ນ. ຄຽງຄູ່ກັບວຽກງານພັດທະນາບຸກຄະລາກອນ ລຣລ ຍັງໄດ້ເອົາໃຈໃສ່ພັດທະນາອົງກອນຢ່າງຕໍ່ເນື່ອງ, ຊຶ່ງໄດ້ສືບຕໍ່ຈັດຕັ້ງລະບົບ

ມາດຕະຖານສາກົນ ISO 9001:2015, ເພື່ອໃຫ້ສອດຄ່ອງກັບລະບົບບໍລິຫານຄຸນະພາບຕາມມາດຕະຖານສາກົນ.

**ການຝຶກອົບຮົມດ້ານການເງິນ ຈັດໂດຍອົງການກອງທຶນສາກົນ IMF**



## ການປະກອບສ່ວນຊ່ວຍສັງຄົມ

ລຮລ ຍາມໃດກໍ່ໄດ້ເອົາໃຈໃສ່ໃນການປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມ ເປັນຕົ້ນແມ່ນການສົມທົບທຶນ, ມອບເປັນວັດຖຸອຸປະກອນການຮຽນ-ການສອນ, ທຶນການສຶກສາ, ມອບເຄື່ອງອຸປະໂພກ-ບໍລິໂພກໃຫ້ແກ່ອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ພາກເອກະຊົນຕາມຄວາມເໝາະສົມຕົວຈິງ. ສະຫຼຸບແລ້ວ, ໃນປີ 2019 ລຮລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມ 25 ຄັ້ງ ເປັນມູນຄ່າທັງໝົດ 249.790.320 ກີບ.

**ການມອບເງິນຊ່ວຍເຫຼືອຜູ້ປະສົບໄພນໍ້າຖ້ວມຢູ່ບັນດາແຂວງພາກໃຕ້**



**ມອບອຸປະກອນການສຶກສາໃຫ້ແກ່ສູນປິ່ນປົວ ແລະ ຮັກສາສຸຂະພາບຕາທົ່ງປົ່ງ**



ລຣລ ຮ່ວມກັບການນຳ ກະຊວງ ພ.ບ ມອບເງິນ ໃຫ້ກະຊວງປ້ອງກັນປະເທດ ເນື່ອງໃນວັນສ້າງຕັ້ງ ກອງທັບປະຊາຊົນລາວ ຄົບຮອບ 70 ປີ



ການປະກອບສ່ວນໃນງານມະຫາກຳບຸນຊ້າງ ແຂວງໄຊຍະບູລີ ປະຈຳປີ 2019



## ພາກສະຫຼຸບ

ການດຳເນີນທຸລະກິດໃນປີ 2019 ແມ່ນມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ຮັບຜົນສຳເລັດດີສົມຄວນ ເຊັ່ນ: ໂຄງການໄຟຟ້ານ້ຳເທີນ 2 ຜະລິດໄຟຟ້າໄດ້ 5.756 GWh. ໂຄງການໄຟຟ້າຄວາມຮ້ອນຫົງສາຜະລິດໄຟຟ້າໄດ້ 11.406 GWh. ໂຄງການໄຟຟ້າເຊປຽນ-ເຊນ້ຳນ້ອຍ ແລະ ໂຄງການໄຟຟ້ານ້ຳງຽບ 1 ໄດ້ສຳເລັດການກໍ່ສ້າງ ແລະ ເລີ່ມການຜະລິດໄຟໄຟ້າຂາຍຢ່າງເປັນທາງການ. ລຣລ ມີລາຍຮັບທັງໝົດ 52.740.035 ໂດລາສະຫະລັດ. ລຣລ ໄດ້ເອົາໃຈໃສ່ໃນການຄຸ້ມຄອງ ແລະ ບໍລິຫານລາຍຮັບ-ລາຍຈ່າຍຂອງຕົນຢ່າງມີປະສິດທິຜົນ ແລະ ມີຄວາມໂປ່ງໃສ ໂດຍໄດ້ມີການກວດສອບຈາກພາຍໃນ-ພາຍນອກ. ຜົນສຳເລັດທັງໝົດທີ່ຍາດມາໄດ້ນັ້ນ ແມ່ນຍ້ອນການຊີ້ນຳ-ນຳພາຢ່າງໃກ້ຊິດຈາກການນຳຂອງກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ, ສະພາບໍລິຫານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງບວກກັບຄວາມສູ້ຊົນ, ຄວາມບຸກບືນທ້າວທັນ ແລະ ຄວາມພະຍາຍາມຂອງຄະນະນຳ ລຣລ ທີ່ໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາໃນການນຳພາພະນັກງານ ລຣລ ທຸກຄົນ ຈັດຕັ້ງປະຕິບັດໜ້າທີ່ໆໄດ້ຮັບມອບໝາຍຈົນໄດ້ຮັບຜົນສຳເລັດເປັນກ້າວໆມາ. ລຣລ ຈະສືບຕໍ່ປະຕິບັດວຽກງານຕາມພາລະບົດບາດ-ໜ້າທີ່ຂອງຕົນໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້ ແລະ ປະສົບຜົນສຳເລັດອັນໃໝ່ ເພື່ອປະກອບສ່ວນສ້າງລາຍຮັບໃຫ້ແກ່ລັດຖະບານຫຼາຍຂຶ້ນ.


ProjectFinance
and InfrastructureFinance
Deals of the Year 2010
Asia-Pacific Power
Hongsa
Ratchaburi Electricity Generating
Lao Holding State Enterprise, Banpu
Bangkok Bank
Bangkok Bank, Siam Commercial Bank, Krung Thai Bank, Government Savings Bank
Kasikornbank, Bank of Ayudhya, Siam City Bank, TMB Bank
Export-Import Bank of Thailand
Milbank Tweed Hadley & McCloy, Latham & Watkins
Chandler & Tong, DFDL Mekong Law, LS Horizon


GlobalEnergy
magazine
Awards2011
Hydroelectric Power Project of the Year
Nam Theun 2, Laos
As voted by our readers
Global Energy Magazine Editor-in-chief Sarah O'Toole comments:
"Throughout 2010 and 2011, the Nam Theun 2 Power Project inLaosgained the respect of the global energy industry. Through hard work, rigour, compromise and sheer determination, coupled with paramount support from banks and multilateral agencies, the Nam Theun 2 management team realized tl acclaimed power project. Representatives form over 100 different countries voted for Nam Thuen 2 as being 'Hydroelectric Power Project of the Year' in Global Energy Magazine's 2011 awards programme. Our sincerest congratulations."


IJGlobal
Asia Pacific
Awards 2014
Asia Pacific Hydro
WINNER
Nam Ngiep 1


The President of
ASSOCIATION OTHERWAYS
MANAGEMENT & CONSULTING
PARIS - FRANCE
Certifies that
LHSE
ລັດວິສາຫະກິດຖືຮຸ້ນລາວ
LAO HOLDING STATE ENTERPRISE
has been selected to receive
The Majestic Falcon Award
for Quality & Excellence
28th November 2016
Dubai-U.A.E
The President,
Charbel S. Tabet
The Majestic Falcon Award for Quality & Excellence
OTHERWAYS
Dubai 2016

globalgroup
United Kingdom

# Certificate of Registration

*This is to certify that the*

**QUALITY MANAGEMENT SYSTEM**

*of*

**LAO HOLDING STATE ENTERPRISE**

**Lane Xang Avenue, Hatsady Village, Chanthabouly District, P.O.Box 11536, Vientiane Capital, LAO P.D.R.**

**Ban Phonchanh, Hongsa District, Sayabouly Province, LAO P.D.R.**

*for*

**Holding and Managing of Shares in Independent Power Producer (IPP) Projects and related Businesses. Sale and Distribution of Fly Ash.**

*has been assessed and registered against the provisions of*

**ISO 9001:2015**

*International Standard*

*With*

| | | | |
|---|---|---|---|
| Registration Number: | 63Q16125 | Project: | 56-16125-2-Q |
| Certification Date: | 10 January 2018 | Code: | K 74.15 |
| Recertification Due Date: | 15 December 2020 | | |
| Certification Approved By: | | Alan Cherry | |
| | | Chairman | |

UKAS MANAGEMENT SYSTEMS
5965

Registration is subject to the management system being continually maintained to the above standard under regular surveillance. Should surveillance not take place when required, registration shall be removed.

This certificate is the property of Globalgroup of Companies Limited.
21 Lansdowne Crescent, Edinburgh, Midlothian, EH12 5EH, Scotland, United Kingdom.

Please validate the authenticity of the certificate at www.globalgroup.net

80003179

globalgroup
ISO 9001

UKAS MANAGEMENT SYSTEMS
5965

Cert No. 63Q16125


ກອງປະຊຸມສະຫຼຸບວຽກງານປະຈຳປີ 2018
ແລະ ທິດທາງແຜນການປີ 2019
ລັດວິສາຫະກິດຖືຮຸ້ນລາວ
ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ວັນທີ 7 ມີນາ 2019
LHSE

ISO 9001

5965

Cert No. 63Q16125

# ລັດວິສາຫະກິດຖືຮຸ້ນລາວ Lao Holding State Enterprise


ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ຕູ້ໄປສະນີ 11536 ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856-21) 263805; ແຟັກ: (+85621) 263804

Lane Xang Avenue, Chanthabouly, P.O Box 11536 Vientiane, Lao PDR, Tel:( +856-21) 263805; Fax: (+85621) 263804